ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 04 ຫາ 08 ທັນວາ 2023



ເປີດຕະຫຼາດກະສິກຳ ແລະ ຊື້ເຄື່ອງປ່າຂອງດົງ (ໝາກຈອງບານ)

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ເປີດຕະຫຼາດກະສິກຳ ແລະ ຊື້ເຄື່ອງປ່າຂອງດົງ (ໝາກຈອງບານ)

ໃນຕອນເຊົ້າວັນທີ 18 ພະຈິກ 2023 ຜ່ານມາ ບໍລິສັດຊຸນດາ ການຄ້າຂົນສົ່ງ ຂາອອກ-ຂາເຂົ້າ ຈຳກັດ, ໄດ້ຈັດພິທີເປີດຕະຫຼາດກະສິກຳ ແລະ ຊື້ເຄື່ອງປ່າຂອງດົງ (ໝາກຈອງບານ) ຂຶ້ນທີ່ບ້ານ ຫຼັກ 40 ເມືອງ ປະທຸມພອນ, ແຂວງ ຈຳປາສັກ. ໂດຍການເປັນປະທານ ຂອງ ທ່ານ ນາງ ປານີ ຢາທໍ່ຕູ້ ຮອງປະທານປະເທດ ແຫ່ງ ສປປ ລາວ. ເຂົ້າຮ່ວມມີ ທ່ານ ປອ. ວິໄລວົງ ບຸດດາຄຳ ເຈົ້າແຂວງໆຈຳປາສັກ, ທ່ານ ປອ. ເພັດ ພົມພິພັກ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ທ່ານ ນາງ ເຂັມມະນີ ພົນເສນາ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ. ມີບັນດາຫົວໜ້າ-ຮອງຫົວໜ້າພະແນກການ ພາຍໃນແຂວງ, ແຂກຕາງໜ້າຈາກສູນກາງ, ເຈົ້າເມືອງ-ຮອງເຈົ້າເມືອງ, ປະທານບໍລິສັດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ວຽງສະໄໝ ສີລິພອນພັນ ເຈົ້າເມືອງໆປະທຸມພອນ ໄດ້ຂຶ້ນລາຍງານ ສະພາບຈຸດພິເສດຂອງເມືອງ, ການຕອບສະໜອງ ແລະ ຜົນໄດ້ຮັບຈາກຜົນຜະລິດກະສິກຳ-ປ່າໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ຮູ້ວ່າ: ເມືອງ ປະທຸມພອນ ເປັນເມືອງໜຶ່ງທີ່ມີຄວາມອຸດົມສົມບູນ ທາງດ້ານຊັບພະຍາກອນປ່າໄມ້-ເຄື່ອງປ່າຂອງດົງ ແລະ ຊີວະນາໆພັນຫຼາກຫຼາຍຊະນິດ, ໂດຍສະເພາະ ແມ່ນປະເພດເຄື່ອງປ່າຂອງດົງ (ໝາກຈອງບານ) ຊຶ່ງກວມເອົາ 30 ໝູ່ບ້ານ ທີ່ມີເນື້ອທີ່ ແລະ ຕົ້ນໝາກຈອງ ຊຶ່ງເປັນເຄື່ອງປ່າຂອງດົງຊະນິດໜຶ່ງ ເປັນຊັບພະຍາກອນທຳມະຊາດ ທີ່ມີຄວາມສຳຄັນ ຕໍ່ກັບສະພາບຊີວິດການເປັນຢູ່ຂອງປະຊາຊົນ ພາຍໃນເມືອງ ແລະ ເມືອງອ້ອມຂ້າງ, ຊຶ່ງມີຄວາມສຳຄັນປະຊາຊົນ ໄດ້ເກັບກູ້ໃຊ້ ເພື່ອເປັນອາຫານ, ເປັນຢາພື້ນເມືອງລາວ ແລະ ເປັນສິນຄ້າ ທີ່ສ້າງລາຍຮັບສູງໃຫ້ແກ່



ປະຊາຊົນ ຈາກຄວາມຕ້ອງການຂອງຕະຫຼາດຕ່າງປະເທດນັບມື້ນັບສູງຂຶ້ນ ໃນປີຕໍ່ປີ ທັງເປັນການສ້າງລາຍຮັບໃຫ້ແກ່ເມືອງຫຼາຍສົມຄວນ ສັງລວມຕົວເລກຂອງການຊື້ - ຂາຍ ການເຄື່ອນຍ້າຍ ໃນໄລຍະ 9 ປີທີ່ຜ່ານມາ ເລີ່ມແຕ່ປີ 2015 - 2023 ມີຈຳນວນ: 1.442.000 ກວ່າໂຕນ.

ບໍລິສັດ ຊຸນດາ ການຄ້າ ຂົນສົ່ງ ຂາອອກ-ຂາເຂົ້າ ຈຳກັດໃຫ້ຮູ້ວ່າ: ຜ່ານມາ ບໍລິສັດ ຊຸນດາ ການຄ້າ ຂາອອກ-ຂາເຂົ້າ ຈຳກັດ ຮ່ວມກັບອຳນາດການປົກຄອງແຂວງ ພະແນກການທີ່ກ່ຽວຂ້ອງຂອງແຂວງ ແລະ ເມືອງ ໄດ້ສ້າງສັນຍາຜູກພັນຮ່ວມກັນທາງດ້ານການແບ່ງຜົນກຳໄລ ແລະ ອາກອນຕ່າງໆທີ່ໄດ້ຮັບຈາກການຊື້-ຂາຍ ຜົນຜະລິດກະສິກຳ-ປ່າໄມ້ ແລະ ເຄື່ອງປ່າຂອງດົງ ໂດຍພະແນກການເງິນແຂວງ ຖືຮຸ້ນ 30% ແລະ ບໍລິສັດ ຖືຮຸ້ນ 70%. ນອກຈາກນັ້ນ, ທາງບໍລິສັດກໍໄດ້ມອບທຶນສະໜັບສະໜູນ ກອງທຶນບູລະນະຮັກສາ, ຄຸ້ມຄອງ, ສະຫງວນບູລະນະປ່າໝາກຈອງ ແລະ ໝາກແໜ່ງຢູ່ທີ່ເມືອງ ປະທຸມພອນ ແລະ ເມືອງ ໂຂງ ຈຳນວນ 300 ລ້ານກີບ ໂດຍຈັດພິທີ ມອບ-ຮັບ ຈາກພະແນກແຜນການ ແລະ ການລົງທຶນແຂວງ ໃນປີ 2022 ທີ່ຜ່ານມາ, ແຕ່ໃນຕໍ່ໜ້າທາງບໍລິສັດ ຈະໄດ້ຂະຫຍາຍການສະໜອງທຶນການຊ່ວຍເຫຼືອ ແລະ ສ້າງເປັນໂຄງການປູກ ແລະ ຟື້ນຟູປ່າໝາກຈອງ ແລະເຄື່ອງປ່າຂອງດົງ ໃຫ້ຫຼາຍຂຶ້ນໃນແຕ່ລະປີ ແລະ ໃນອະນາຄົດ ແມ່ນຈະໄດ້ສ້າງໂຮງງານປຸງແຕ່ງເປັນຜະລິດຕະພັນໝາກຈອງ ສຳເລັດຮູບ ທາງບໍລິສັດຊຸນດາການຄ້າຂົນສົ່ງ ຂາອອກ-ຂາເຂົ້າ ຈຳກັດ ຍັງເຫັນວ່າຜົນຜະລິດ ກະສິກຳ-ປ່າໄມ້ ແລະ ເຄື່ອງປ່າຂອງດົງ ຈາກປ່າທຳມະຊາດ ໃນແຕ່ລະປີຍັງມີການຊື້-ຂາຍ ແບບຊະຊາຍບໍ່ລວມສູນ ສົ່ງຜົນສະທ້ອນຕໍ່ການເກັບລາຍຮັບ ງົບປະມານ.

ສະນັ້ນ, ປີ 2022 ບໍລິສັດ ຈຶ່ງຕັດສິນໃຈ ໃນການລົງທຶນ ສ້າງສາງ-ຕະຫຼາດເກັບນີ້ຂື້ນ ໃນມູນຄ່າການລົງທຶນ 5 ລ້ານຕື້ກີບ ເພື່ອຮອງຮັບ ແລະ ເກັບຊື້ ໃຫ້ໄດ້ສິນຄ້າທີ່ມີມາດຕະຖານຕາມຄວາມຕ້ອງການຂອງຕະຫຼາດຕ່າງປະເທດ, ເປັນຕົວແທນ ແລະ ກາຍເປັນຕະຫຼາດເກັບຊື້ ທີ່ມີຈຸດສຸມ, ບໍ່ໃຫ້ກະແຈກກະຈາຍ ທັງນີ້ກໍ່ເພື່ອຮັບປະກັນໃຫ້ແກ່ການ ຈັດເກັບລາຍຮັບ ເຂົ້າງົບປະມານ.

ເພື່ອເຮັດໃຫ້ພິທີດັ່ງກ່າວມີຄວາມໝາຍສຳຄັນ ປະທານພິທີ ພ້ອມດ້ວຍ ການນຳຂອງແຂວງ, ຈາກສູນກາງ ແລະ ປະທານບໍລິສັດ ໄດ້ຮ່ວມກັນຕັດແຖບຜ້າ ພ້ອມທັງລັ່ນຄອງ 9 ບາດ ແລະ ປ່ອຍປຸມເປົ້າ ເພື່ອເປັນການເປີດຕະຫຼາດດັ່ງກ່າວຢ່າງເປັນທາງການ. ໂອກາດດຽວກັນນີ້ ຄະນະດັ່ງກ່າວໄດ້ສືບຕໍ່ເຂົ້າຮ່ວມພິທີປູກຕົ້ນໝາກຈອງບານ ຕິດພັນກັບການຟື້ນຟູ, ຄຸ້ມຄອງ ແລະ ປົກປັກຮັກສາ ອຸທິຍານແຫ່ງຊາດ ດົງຫົວສາວ ທີ່ບ້ານ ນ້ຳພາກ ເມືອງປະທຸມພອນ ຈຸດປະສົງແມ່ນເພື່ອປົກປັກຮັກສາ, ຄຸ້ມຄອງຄວາມຫຼາກຫຼາຍຂອງຊີວະນາໆພັນ ແລະ ເຄື່ອງປ່າຂອງດົງ, ອະນຸລັກຄວາມສວຍສົດງົດງາມຂອງທຳມະຊາດ ຕາມທິດສີຂຽວ ແລະ ຍືນຍົງ.



ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ຫອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;